ທະນາຄານກຸງເທບ ຈຳກັດ (ມະຫາຊົນ)
- ສາຂາປາກເຊ

# ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017

Deloitte

ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ
ອາຄານຕະຫຼາດຫຼັກຊັບລາວ
ບ້ານໂພນທັນ, ຖະໜົນ T4
ເມືອງໄຊເສດຖາ
ຕູ້ໄປສະນີ 2017, ນະຄອນຫຼວງວຽງຈັນ
ສປປ ລາວ

ໂທ : +856 21 419 300
ແຟັກ: +856 21 419 305

Deloitte (Lao) Sole Company Limited
Lao Securities Exchange Building
Phonthan Village, T4 Road
Saysettha District
P.O. Box 2017, Vientiane Capital
Lao PDR

Tel : +856 21 419 300
Fax: +856 21 419 305
www.deloitte.com

# ບົດລາຍງານການກວດສອບຂອງນັກກວດສອບບັນຊີຕາມກົດໝາຍ

## ເຖິງ: ຜູ້ຈັດການສາຂາ ທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

### ຄຳເຫັນ

ຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ("ສາຂາ") ເຊິ່ງລວມມີໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2017, ໃບລາຍງານຜົນການດຳເນີນງານ, ໃບລາຍງານການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່ ແລະ ໃບລາຍງານກະແສເງິນສົດ ສຳລັບທ້າຍປີການບັນຊີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ຊຶ່ງປະກອບດ້ວຍສັງລວມວິທີການບັນຊີທີ່ສຳຄັນ.

ຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂ້າງເທິງນີ້ຂອງທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ໄດ້ມີການນຳສະເໜີຢ່າງເໝາະສົມ ເຊິ່ງລວມມີ ຖານະການເງິນ ໃນວັນທີ 31 ທັນວາ 2017 ແລະ ຜົນການດຳເນີນງານ ແລະກະແສເງິນສົດ ຂອງທະນາຄານ ສຳລັບທ້າຍປີການບັນຊີດັ່ງກ່າວ ໄດ້ຖືກສ້າງຂຶ້ນໂດຍສອດຄ່ອງກັບລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຊຶ່ງໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 3 ຂອງ ເອກະສານລາຍງານການເງິນ.

### ພື້ນຖານໃນການອອກຄຳເຫັນ

ຂ້າພະເຈົ້າໄດ້ປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ (ISAs). ຄວາມຮັບຜິດຊອບຂອງຂ້າພະເຈົ້າພາຍໃຕ້ມາດຕະຖານດັ່ງກ່າວແມ່ນໄດ້ອະທິບາຍເພີ່ມເຕີມໃນວັກທີ່ມີຫົວຂໍ້ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນຂອງບົດລາຍງານນີ້. ຂ້າພະເຈົ້າມີຄວາມເປັນອິດສະລະຈາກສາຂາໂດຍສອດຄ່ອງຕາມມາດຕະຖານສາກົນດ້ານຈັນຍາບັນສຳຫຼັບນັກວິຊາການບັນຊີທີ່ອອກໂດຍຄະນະກຳມະການ (IESBA Code) ພ້ອມກັນນັ້ນກໍ່ໄດ້ປະຕິບັດຕາມຄວາມຮຽກຮ້ອງຕ້ອງການດ້ານຈັນຍາບັນທີ່ພົວພັນກັບການກວດສອບເອກະສານລາຍງານການເງິນຂອງພວກເຮົາ ແລະ ຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆຕາມກົດຈັນຍາບັນເຫຼົ່ານີ້. ຂ້າພະເຈົ້າເຊື່ອວ່າຫຼັກຖານການ ກວດສອບບັນຊີທີ່ຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃນການອອກຄຳເຫັນຂອງຂ້າພະເຈົ້າ.

## ມູນແລະເຫດການທີ່ເນັ້ນໜັກ - ຫຼັກການບັນຊີ ແລະ ຂໍ້ຈຳກັດໃນການນຳໃຊ້

ຂ້າພະເຈົ້າຂໍໃຫ້ທ່ານເບິ່ງບົດອະທິບາຍປະກອບຂໍ້ທີ 2 ແລະ 3 ຂອງເອກະສານລາຍງານການເງິນສະບັບນີ້ ຊຶ່ງໄດ້ອະທິບາຍພື້ນຖານການບັນຊີທີ່ສຳຄັນ ແລະນະໂຍບາຍການບັນຊີທີ່ສຳຄັນ ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ເພື່ອສະໜອງຂໍ້ມູນສຳລັບໃຊ້ພາຍໃນສາຂາທະນາຄານ ສະນັ້ນ, ເອກະສານລາຍງານການເງິນ ອາດບໍ່ເໝາະສົມຫາກມີການນຳໃຊ້ເຂົ້າໃນວັດຖຸປະສົງອື່ນ ຂ້າພະເຈົ້າບໍ່ໄດ້ສະແດງຄວາມເຫັນຢ່າງມີເງື່ອນໄຂໃນເລື່ອງນີ້.

## ບັນຫາອື່ນໆ

ເອກະສານລາຍງານການເງິນ ຂອງທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 ທີ່ນຳສະເໜີໃນເອກະສານລາຍງານການເງິນນີ້ເພື່ອເປັນຂໍ້ມູນສົມທຽບຍອດ ແມ່ນໄດ້ຖືກກວດສອບໂດຍ ບໍລິສັດກວດສອບບັນຊີອື່ນ ເຊິ່ງອອກບົດລາຍງານການກວດສອບລົງວັນທີ 31 ມີນາ 2017 ແບບບໍ່ມີເງື່ອນໄຂຕໍ່ເອກະສານລາຍງານການເງິນ

## ຄວາມຮັບຜິດຊອບຂອງຜູ້ບໍລິຫານໃນການກະກຽມເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໂດຍເໝາະສົມ, ສອດຄ່ອງກັບລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຊຶ່ງໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 3 ຂອງເອກະສານລາຍງານການເງິນ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນເພື່ອໃຫ້ສາມາດກະກຽມບົດລາຍງານການເງິນທີ່ປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການປະເມີນຄວາມສາມາດຂອງສາຂາໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ, ຮັບຜິດຊອບເປີດເຜີຍຂໍ້ມູນທີ່ກ່ຽວກັບຄວາມສາມາດໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ (ຕາມຄວາມເໝາະສົມ) ແລະ ຮັບຜິດຊອບໃນການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງ ຍົກເວັ້ນຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຍຸບເລີກສາຂາ ຫຼື ຢຸດການດຳເນີນກິດຈະການ ຫຼື ບໍ່ສາມາດດຳເນີນກິດຈະການແບບຕໍ່ເນື່ອງຕໍ່ໄປໄດ້.

## ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງຂ້າພະເຈົ້າມີຈຸດປະສົງເພື່ອໃຫ້ໄດ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານທາງການເງິນປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະເພື່ອອອກບົດລາຍງານການກວດສອບທີ່ມີຄຳເຫັນຂອງຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າການປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ (ISAs) ຈະສາມາດກວດພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນທີ່ມີຢູ່ໄດ້ສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນເມື່ອຄາດຄະເນໄດ້ຢ່າງສົມເຫດສົມຜົນວ່າລາຍການທີ່ຂັດຕໍ່ຄວາມເປັນຈິງ ແຕ່ລະລາຍການ ຫຼື ທຸກລາຍການລວມເຂົ້າກັນຈະມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນ ຈາກການນຳໃຊ້ບົດລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງຂ້າພະເຈົ້າຕາມມາດຕະຖານສາກົນດ້ານການກວດສອບບັນຊີ (ISAs) ຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ, ການຕັ້ງຂໍ້ສົງໄສຕະຫຼອດການກວດສອບ. ການປະຕິບັດງານຂອງຂ້າພະເຈົ້າຍັງລວມເຖິງ:

- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງໃນເອກະສານລາຍງານການເງິນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ, ອອກແບບ ແລະ ວາງແຜນການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ເກັບຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນບ່ອນອີງໃນການສະແດງຄຳເຫັນຂອງຂ້າພະເຈົ້າ. ຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນຊຶ່ງເປັນຜົນມາຈາກການທຸຈະລິດຈະສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ ເນື່ອງຈາກການທຸຈະລິດອາດກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ການຕັ້ງໃຈປິດບັງຂໍ້ມູນ, ການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງຫຼືການແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບວິທີການກວດສອບທີ່ເໝາະສົມກັບສະຖານະການ ແຕ່ບໍ່ແມ່ນເພື່ອຈຸດປະສົງສະແດງຄຳຄິດເຫັນຕໍ່ຄວາມມີປະສິດຖິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຜູ້ບໍລິຫານໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນການທາງບັນຊີ ແລະ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງເຊິ່ງກຳນົດຂຶ້ນໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານແບບຕໍ່ເນື່ອງທີ່ເປັນສາລະສຳຄັນບໍ່ຕໍ່ກັບເຫດການ ຫຼື ສະຖານະການທີ່ອາດກໍ່ໃຫ້ເກີດຄວາມສົງໄສທີ່ມີຄວາມສຳຄັນຕໍ່ຄວາມສາມາດໃນການດຳເນີນກິດຈະການແບບຕໍ່ເນື່ອງຂອງສາຂາ. ຖ້າຂ້າພະເຈົ້າໄດ້ສະຫຼຸບວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານແບບຕໍ່ເນື່ອງທີ່ເປັນສາລະສຳຄັນ, ຂ້າພະເຈົ້າຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງຂ້າພະເຈົ້າໃນການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ, ຄຳເຫັນຂອງຂ້າພະເຈົ້າອາດມີການປ່ຽນແປງໄປ. ຂໍ້ສະຫຼຸບຂອງຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ຮອດວັນທີອອກບົດລາຍງານການກວດສອບບັນຊີຂອງຂ້າພະເຈົ້າ. ເຖິງຢ່າງໃດກໍ່ຕາມ, ເຫດການ ຫຼື ສະຖານະການທີ່ອາດເກີດຂຶ້ນໃນອະນາຄົດອາດເປັນສາເຫດໃຫ້ສາຂາຕ້ອງຢຸດຕິການດຳເນີນກິດຈະການແບບຕໍ່ເນື່ອງ.

- ປະເມີນການນຳສະເໜີ ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນໂດຍລວມ, ລວມເຖິງການເປີດເຜີຍຂໍ້ມູນກ່ຽວກັບ ລາຍການ ແລະ ເຫດການໃນເອກະສານລາຍງານການເງິນຢ່າງຖືກຕ້ອງຕາມຄວາມເໝາະສົມ.

ຂ້າພະເຈົ້າໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບແຜນປະຕິບັດງານ, ໜ້າວຽກ, ເວລາທີ່ຈະໃຊ້ໃນການກວດສອບ ແລະ ປະເດັນທີ່ມີຄວາມສຳຄັນທີ່ພົບຈາກການກວດສອບ ລວມເຖິງຂໍ້ບົກພ່ອງທີ່ມີຄວາມສຳຄັນຕໍ່ລະບົບການຄວບຄຸມພາຍໃນຊຶ່ງຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງຂ້າພະເຈົ້າ.

ທ່ານ ຊະວາລາ ທຽນປະເສີດກິດ
ນັກກວດສອບບັນຊີຕາມກົດໝາຍ
**ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ**

**ນະຄອນຫລວງວຽງຈັນ,**
ວັນທີ 30 ມີນາ, 2018

**ທະນາຄານກຸງເທບ ຈຳກັດ (ມະຫາຊົນ)**

**ສາຂາປາກເຊ**

**ຂໍ້ມູນທົ່ວໄປຂອງສາຂາ**

| | |
|---|---|
| ສາຂາ | ທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ |
| ໃບອະນຸຍາດເລກທີ | 40/ທຫລ |
| ທີ່ຕັ້ງຫ້ອງການ | ຖະໜົນ ສາລາຂຽວດົງຈອງ,<br>ເຮືອນເລກທີ 3 ບ້ານ ໂພນສະຫວັນ, ເມືອງ ປາກເຊ,<br>ແຂວງ ຈຳປາສັກ, ສປປ ລາວ |
| ຜູ້ຈັດການສາຂາ | ທ່ານ ສົມໂຊກ ວໍຣະຄຸນພິສິດ |
| ຜູ້ກວດສອບບັນຊີ | ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ |

**ໜ້າທີ່ຮັບຜິດຊອບຂອງຜູ້ຈັດການຕໍ່ກັບເອກະສານລາຍງານການເງິນ**

ຜູ້ຈັດການສາຂາມີໜ້າທີ່ຮັບຜິດຊອບເພື່ອໃຫ້ໝັ້ນໃຈວ່າເອກະສານລາຍງານການເງິນດັ່ງກ່າວມີການກະກຽມ ແລະ ສະແດງຖານະການເງິນຂອງສາຂາ ໃນວັນທີ 31 ທັນວາ 2017, ຜົນການດຳເນີນງານ, ການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່ ແລະ ກະແສເງິນສົດສຳລັບທ້າຍປີການບັນຊີດັ່ງກ່າວ ຢ່າງຖືກຕ້ອງ. ສະນັ້ນ, ໃນການກະກຽມເອກະສານລາຍງານການເງິນນີ້, ທາງຜູ້ຈັດການສາຂາຕ້ອງໄດ້ປະຕິບັດດັ່ງລຸ່ມນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມໂດຍມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ;

ii) ປະຕິບັດໃຫ້ສອດຄ່ອງຕາມຫຼັກການບັນຊີທະນາຄານ ແລະ ວິທີການບັນຊີ ພ້ອມທັງແຈ້ງການອື່ນໆ ທີ່ກ່ຽວຂ້ອງຊຶ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ ທີ 3 ໃນເອກະສານລາຍງານການເງິນ ແລະ ໃຫ້ແນ່ໃຈວ່າສິ່ງເຫຼົ່ານີ້ໄດ້ຮັບການເປີດເຜີຍຢ່າງເໝາະສົມ, ມີຄຳອະທິບາຍ ແລະ ສະແດງອອກໃນເອກະສານລາຍງານການເງິນ;

iii) ເກັບຮັກສາຫຼັກຖານທີ່ໃຊ້ໃນການບັນທຶກບັນຊີຢ່າງພຽງພໍ ແລະ ມີລະບົບການຄວບຄຸມພາຍໃນທີ່ມີປະສິດທິພາບ;

iv) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງ, ເວັ້ນແຕ່ວ່າບໍ່ເໝາະສົມທີ່ຈະຄາດວ່າສາຂາຈະດຳເນີນການຕໍ່ໄປໃນອະນາຄົດອັນໃກ້; ແລະ

v) ຄວບຄຸມ ແລະ ຊີ້ແນວທາງໃຫ້ສາຂາໃນການຕັດສິນໃຈທີ່ສຳຄັນ ທີ່ສົ່ງຜົນກະທົບ ຕໍ່ການດຳເນີນງານ ແລະ ຜົນງານຢ່າງມີປະສິດທິພາບ ແລະ ໃຫ້ແນ່ໃຈວ່າການຕັດສິນໃຈດັ່ງກ່າວສົ່ງຜົນກະທົບທີ່ເໝາະສົມໃນເອກະສານລາຍງານການເງິນ.

ຜູ້ຈັດການສາຂາໄດ້ຢັ້ງຢືນວ່າ ທາງສາຂາໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງນີ້ເຂົ້າໃນການກະກຽມເອກະສານລາຍງານການເງິນ.

ທ່ານ ສົມໂຊກ ວໍຣະຄຸນພິສິດ

ຜູ້ຈັດການສາຂາ

30 ມີນາ 2018

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານຖານະການເງິນ

ໃນວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2017 | 2016 |
|---|---|---|---|
| ຊັບສິນ | | | |
| **ເງິນສົດ ແລະ ເງິນຝາກຢູ່ ທຫລ** | | **52,828,403,560** | **58,143,534,112** |
| ເງິນສົດໃນກຳມື | 4 | 1,591,973,915 | 2,084,361,666 |
| ເງິນຝາກຢູ່ ທຫລ | 5 | 51,236,429,645 | 56,059,172,446 |
| **ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ** | **6** | **10,000,000,000** | **20,000,000,000** |
| **ເງິນກູ້ໃຫ້ແກ່ລູກຄ້າ (ຫຼັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ)** | **7** | **15,100,826,097** | - |
| **ຊັບສົມບັດຄົງທີ່** | | **3,350,971,559** | **4,138,697,953** |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 8 | 622,665 | 276,921,300 |
| ຊັບສົມບັດຄົງທີ່ມີຕົວຕົນ | 9 | 3,350,348,894 | 3,861,776,653 |
| **ຊັບສິນອື່ນໆ** | | **5,431,854,656** | **6,040,112,155** |
| ດອກເບ້ຍຄ້າງຮັບ | 10 | 310,793,607 | 237,222,222 |
| ຊັບສິນອື່ນໆ | 11 | 5,121,061,049 | 5,802,889,933 |
| **ລວມຍອດຊັບສິນ** | | 86,712,055,872 | 88,322,344,220 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານຖານະການເງິນ (ຕໍ່)

ໃນວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2017 | 2016 |
|---|---|---|---|
| **ໜີ້ສິນ ແລະ ບັນຊີຂອງສຳນັກງານໃຫຍ່** | | | |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 12 | **4,212,888,639** | **1,983,872,575** |
| ເງິນຝາກຮຽກເກັບເມື່ອຕ້ອງການ | | 3,704,868,091 | 1,585,015,363 |
| ເງິນເງິນຝາກມີກຳນົດ | | 507,280,228 | 398,857,212 |
| ໜີ້ຕ້ອງສົ່ງອື່ນໆ ໃຫ້ລູກຄ້າ | | 740,320 | - |
| **ໜີ້ສິນອື່ນໆ** | | **177,405,282** | **128,615,079** |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | 13 | 7,149,264 | 8,427,279 |
| ໜີ້ສິນອື່ນໆ | | 170,256,018 | 120,187,800 |
| **ລວມໜີ້ສິນ** | | 4,390,293,921 | 2,112,487,654 |
| **ບັນຊີຂອງສຳນັກງານໃຫຍ່** | | | |
| ທຶນຂອງສາຂາ | 14 | 101,650,000,000 | 101,650,000,000 |
| ລູກໜີ້ສາຂາອື່ນ | 15 | (48,131,870,654) | (21,160,416,948) |
| ເຈົ້າໜີ້ສາຂາອື່ນ | 15 | 33,705,418,972 | 9,452,486,393 |
| ກິດຈະການໃຫ້ສິນເຊື່ອ | 7.2 | 182,625,600 | - |
| ຂາດທຶນສະສົມ | | (5,084,411,967) | (3,732,212,879) |
| **ລວມບັນຊີຂອງສຳນັກງານໃຫຍ່** | | 82,321,761,951 | 86,209,856,566 |
| **ລວມໜີ້ສິນ ແລະ ບັນຊີຂອງສຳນັກງານໃຫຍ່** | | 86,712,055,872 | 88,322,344,220 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານຜົນການດຳເນີນງານ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2017 | ສຳລັບໄລຍະເວລາ ແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 |
|---|---|---|---|
| **ລາຍຮັບດອກເບ້ຍ** | | **2,188,063,383** | **386,811,262** |
| ລາຍຮັບດອກເບ້ຍຈາກລາຍການລະຫວ່າງທະນາຄານ | | 675,323,438 | 192,089,040 |
| ລາຍຮັບດອກເບ້ຍຈາກເງິນລົງທຶນ | | 990,277,778 | 194,722,222 |
| ລາຍຮັບດອກເບ້ຍຈາກເງິນກູ້ໃຫ້ລູກຄ້າ | | 522,462,167 | - |
| **ລາຍຈ່າຍດອກເບ້ຍ** | | **(133,121,258)** | **(15,151,666)** |
| ລາຍຈ່າຍດອກເບ້ຍຈາກລາຍການລະຫວ່າງທະນາຄານ | | (103,542,510) | (500) |
| ລາຍຈ່າຍດອກເບ້ຍສຳລັບລູກຄ້າເງິນຝາກ | | (29,578,748) | (15,151,166) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **2,054,942,125** | **371,659,596** |
| **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ** | | **293,439,489** | **98,314,831** |
| **ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ** | | **(37,165,000)** | **(2,760,000)** |
| ລາຍຮັບຄ່າທຳນຽມ ແລະ ການບໍລິການ ສຸດທິ | | 2,311,216,614 | 467,214,427 |
| **ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ** | | **607,081,222** | **(36,706,480)** |
| **ລາຍຮັບອື່ນໆ** | | **84,949** | **100,942** |
| **ລາຍຈ່າຍທົ່ວໄປ ແລະຄ່າໃຊ້ຈ່າຍໃນການບໍລິຫານ** | | **(3,209,373,058)** | **(3,358,596,990)** |
| ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງກັບບຸກຄະລາກອນ | | (2,040,217,948) | (1,824,164,282) |
| ລາຍຈ່າຍອື່ນໆໃນການດຳເນີນງານ | | (1,169,155,110) | (1,534,432,708) |
| **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ** | **8, 9** | **(878,583,215)** | **(804,224,778)** |
| **ລາຍຈ່າຍອື່ນໆ** | | **(182,625,600)** | - |
| ກິດຈະການໃຫ້ສິນເຊື່ອ | 7.2 | (182,625,600) | - |
| ຂາດທຶນກ່ອນອາກອນກຳໄລ | | (1,352,199,088) | (3,732,212,879) |
| **ລາຍຈ່າຍອາກອນກຳໄລ** | | - | - |
| ຂາດທຶນສຸດທິສຳລັບປີ | | (1,352,199,088) | (3,732,212,879) |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່

ສຳລັບປີສິ້ນສຸດວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | ທຶນສາຂາ | ຍອດເງິນສຸດທິລະຫວ່າງ ບັນຊີກັບສຳນັກງານໃຫຍ່ ແລະ ສາຂາອື່ນພາຍໃຕ້ ການດຳເນີນງານຂອງ ກິດຈະການດຽວກັນ | ເງິນແຮທົ່ວໄປ ສຳຫຼັບການສູນເສຍ ເງິນກູ້ລວມສຳຫຼັບ ກິດຈະການໃຫ້ສິນເຊື່ອ | ຂາດທຶນສະສົມ | ລວມບັນຊີຂອງ ສຳນັກງານໃຫຍ່ |
|---|---|---|---|---|---|---|
| **ຍອດຍົກມາໃນວັນທີ 5 ມັງກອນ 2016** | | | | | | |
| (ວັນສ້າງຕັ້ງ) | | - | - | - | - | - |
| ເພີ່ມຂຶ້ນໃນລະຫວ່າງໄລຍະເວລາ | 14 | 101,650,000,000 | (11,707,930,555) | - | - | 89,942,069,445 |
| ຂາດທຶນສຸດທິສຳລັບປີ | | - | - | - | (3,732,212,879) | (3,732,212,879) |
| **ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2016** | | 101,650,000,000 | (11,707,930,555) | - | (3,732,212,879) | 86,209,856,566 |
| **ຍອດຍົກມາໃນວັນທີ 1 ມັງກອນ 2017** | | 101,650,000,000 | (11,707,930,555) | - | (3,732,212,879) | 86,209,856,566 |
| ເພີ່ມຂຶ້ນໃນລະຫວ່າງປີ | | - | (2,718,521,127) | - | - | (2,718,521,127) |
| ຂາດທຶນສຸດທິສຳລັບປີ | | - | - | - | (1,352,199,088) | (1,352,199,088) |
| ກິດຈະການໃຫ້ສິນເຊື່ອ | 7.2 | - | - | 182,625,600 | - | 182,625,600 |
| **ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2017** | | 101,650,000,000 | (14,426,451,682) | 182,625,600 | (5,084,411,967) | 82,321,761,951 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານກະແສເງິນສົດ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2017 | ສຳລັບໄລຍະເວລາ ແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 |
|---|---|---|---|
| **ກະແສເງິນສົດຈາກ ກິດຈະກຳການດຳເນີນງານ** | | | |
| ຂາດທຶນກ່ອນອາກອນກຳໄລ | | (1,352,199,088) | (3,732,212,879) |
| ດັດແກ້ເພື່ອສົມທຽບລາຍຮັບສຸດທິປະຈຳປີກັບ | | | |
| ເງິນສົດຮັບ(ຈ່າຍ) ຈາກກິດຈະກຳການດຳເນີນງານ: | | | |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ | 8, 9 | 878,583,215 | 804,224,778 |
| ເງິນແຮຂາດທຶນ [illegible] ການສູນເສຍເງິນກູ້ [illegible] ກິດຈະການໃຫ້ສິນເຊື່ອ | 7.2 | 177,997,920 | - |
| ຂາດທຶນຈາກອັດຕາແລກປ່ຽນ ທີ່ຍັງບໍ່ເກີດຂຶ້ນ | 7.2 | 4,627,680 | - |
| ລາຍຮັບດອກເບ້ຍ | | (2,188,063,383) | (386,811,262) |
| ລາຍຈ່າຍດອກເບ້ຍ | | 133,121,258 | 15,151,666 |
| ເງິນສົດຈາກການດຳເນີນງານ | | (2,345,932,398) | (3,299,647,697) |
| ຮັບດອກເບ້ຍ | | 2,114,491,998 | 149,589,040 |
| ຈ່າຍດອກເບ້ຍ | | (134,399,273) | (6,724,387) |
| ເງິນສົດສຸດທິໃຊ້ໃນ ກິດຈະກຳດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ: | | (365,839,673) | (3,156,783,044) |
| ການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ: | | | |
| ການຫຼຸດລົງ (ເພີ່ມຂຶ້ນ) ຂອງຊັບສິນດຳເນີນງານ: | | | |
| ເງິນຝາກຕາມລະບຽບການ | | 24,540,684,019 | (24,985,000,000) |
| ເງິນກູ້ໃຫ້ແກ່ລູກຄ້າ | | (15,100,826,097) | - |
| ຊັບສິນອື່ນໆ | | 681,828,884 | (5,802,889,933) |
| ການເພີ່ມຂຶ້ນ (ຫຼຸດລົງ) ຂອງໜີ້ສິນດຳເນີນງານ: | | | |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 2,229,016,064 | 1,983,872,575 |
| ໜີ້ສິນອື່ນໆ | | 50,068,218 | 120,187,800 |
| ເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ | | 12,034,931,415 | (31,840,612,602) |

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບປີສິ້ນສຸດວັນທີ 31 ທັນວາ 2017

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2017 | ສຳລັບໄລຍະເວລາ ແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ລາຍຈ່າຍໃນການຊື້ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ | | - | (20,000,000,000) |
| ລາຍຮັບຈາກການໄຖ່ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ | | 10,000,000,000 | - |
| ລາຍຈ່າຍໃນການຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ | | - | (553,842,600) |
| ລາຍຈ່າຍໃນການຊື້ຊັບສິນບັດຄົງທີ່ມີຕົວຕົນ | | (90,856,821) | (4,389,080,131) |
| ເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການລົງທຶນ | | 9,909,143,179 | (24,942,922,731) |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | | |
| ທຶນສາຂາ | | - | 101,650,000,000 |
| ຍອດເງິນສຸດທິລະຫວ່າງບັນຊີກັບສຳນັກງານໃຫຍ່ ແລະ ສາຂາອື່ນພາຍໃຕ້ການດຳເນີນງານຂອງກິດຈະການດຽວກັນ | | (2,718,521,127) | (11,707,930,555) |
| ເງິນສົດສຸດທິ (ໃຊ້ໃນ) ຈາກກິດຈະກຳການເງິນ | | (2,718,521,127) | 89,942,069,445 |
| **ເພີ່ມຂຶ້ນ (ຫຼຸດລົງ) ສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 19,225,553,467 | 33,158,534,112 |
| ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ | | 33,158,534,112 | - |
| ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ | | 52,384,087,579 | 33,158,534,112 |
| **ເງິນສົດ ແລະ ທຽບເທົ່າເງິນສົດ** | | | |
| ເງິນສົດ | 4 | 1,591,973,915 | 2,084,361,666 |
| ເງິນຝາກຢູ່ ທຫລ | 5 | 50,792,113,664 | 31,074,172,446 |
| | | 52,384,087,579 | 33,158,534,112 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

**ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ**
**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017**

## 1. ຂໍ້ມູນທົ່ວໄປຂອງສາຂາ

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ("ທະນາຄານ") ແມ່ນ ທະນາຄານສ້າງຂຶ້ນແລະດຳເນີນທຸລະກິດຢູ່ໃນປະເທດໄທ. ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ("ສາຂາ") ແມ່ນ ສາຂາໜຶ່ງຂອງທະນາຄານ ເຊິ່ງໄດ້ດຳເນີນທຸລະກິດ ຢູ່ໃນ ສປປ ລາວ ແລະໄດ້ຮັບໃບອະນຸຍາດຈາກທະນະຄານແຫ່ງ ສປປ ລາວ ("ທຫລ") ຕາມໃບອະນຸຍາດເລກທີ 40/ທຫລ ລົງວັນທີ 10 ທັນວາ 2015. ທຸລະກິດຫລັກຂອງສາຂາ ແມ່ນ ການໃຫ້ບໍລິການລວມດ້ານທະນາຄານ ແລະການບໍລິການ ທີ່ກ່ຽວຂ້ອງກັບການບໍລິການທຸລະກຳທາງດ້ານການເງິນໃນ ສປປ ລາວ.

ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຮັບການອະນຸມັດ ແລະອະນຸຍາດໃຫ້ອອກເຜີຍແຜ່ໂດຍຜູ້ບໍລິຫານສາຂາ ໃນວັນທີ 30 ມີນາ, 2018.

## 2. ພື້ນຖານໃນການນຳສະເໜີແລະການກະກຽມເອກະສານລາຍງານທາງການເງິນ

ສາຂາບໍ່ແມ່ນນິຕິບຸກຄົນທີ່ແຍກອອກຕ່າງຫາກຈາກສຳນັກງານໃຫຍ່, ເອກະສານລາຍງານການເງິນນີ້ແມ່ນໄດ້ກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນໃຫ້ເຫັນພຽງລາຍການທີ່ໄດ້ບັນທຶກໃນສາຂາ ເທົ່ານັ້ນ.

ເອກະສານລາຍງານການເງິນຂອງສາຂາແມ່ນໄດ້ຖືກກະກຽມຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີທີ່ສຳຄັນຂອງສາຂາໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ ກ່ຽວຂ້ອງ. ຫຼັກການດ້ານການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກຫຼັກການບັນຊີທີ່ນຳໃຊ້ໂດຍທົ່ວໄປ ໃນບັນດາປະເທດອື່ນໆ ແລະ ເຂດອຳນາດຄຸ້ມຄອງອື່ນ. ເອກະສານລາຍງານການເງິນແມ່ນບໍ່ໄດ້ມີເຈດຕະນາ ທີ່ຈະນຳສະເໜີຖານະທາງດ້ານການເງິນ ແລະ ຜົນການດຳເນີນງານ ໂດຍອີງຕາມຫຼັກການຂອງເຂດອຳນາດການຄຸ້ມຄອງອື່ນ. ດ້ວຍເຫດນີ້, ເອກະສານລາຍງານການເງິນສະບັບນີ້ແມ່ນເພື່ອນຳສະເໜີໃຫ້ກັບບຸກຄົນທົ່ວໄປໄດ້ຮັບຮູ້ກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ວິທີການປະຕິບັດຂອງສາຂາເທົ່ານັ້ນ.

ເອກະສານລາຍງານທາງການເງິນນີ້ແມ່ນໄດ້ກະກຽມຕາມຫຼັກການຄົງຄ້າງ ພາຍໃຕ້ຫຼັກການການບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ, ທີ່ໄດ້ເປີດເຜີຍໄວ້ໃນນະໂຍບາຍການບັນຊີທີ່ສຳຄັນ (ຕາມບົດອະນາຍຂໍ້ທີ 3).

ການກະກຽມເອກະສານລາຍການເງິນແມ່ນສ້າງຂຶ້ນໂດຍສອດຄ່ອງກັບກັບນະໂຍບາຍການບັນຊີຂອງສາຂາທີ່ໄດ້ວາງອອກເຊິ່ງໄດ້ກຳນົດໃຫ້ຝ່າຍບໍລິຫານມີການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຖານທີ່ມີຜົນຕໍ່ກັບການລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນລວມທັງການເປີດເຜີຍພາລະຜູກພັນທາງດ້ານຊັບສິນ ແລະ ໜີ້ສິນທີ່ມີໃນວັນທີທີ່ລາຍງານ ແລະ ຂໍ້ມູນລາຍຮັບ ແລະ ລາຍຈ່າຍ ໃນຊ່ວງໄລຍະເວລາຂອງການລາຍງານ. ເຖິງແມ່ນວ່າ ການຄາດຄະເນເຫຼົ່ານີ້ແມ່ນສ້າງຂຶ້ນບົນພື້ນຖານຄວາມເຂົ້າໃຈທີ່ດີຂອງຜູ້ບໍລິຫານຕໍ່ກັບເຫດການ ແລະການປະຕິບັດຕົວຈິງໃນປັດຈຸບັນ, ຕົວເລກທີ່ເກີດຂຶ້ນຈິງອາດມີຄວາມຄາດເຄື່ອນຈາກຕົວເລກທີ່ໄດ້ຄາດຄະເນໄວ້.

## 3. ນະໂຍບາຍການບັນຊີທີ່ສຳຄັນ

### 3.1 ການຮັບຮູ້ລາຍຮັບ

ສາຂາຮັບຮູ້ລາຍຮັບດອກເບ້ຍ ແລະ ຄ່າທຳນຽມຕາມຫຼັກການຄົງຄ້າງ, ຍົກເວັ້ນລາຍຮັບດອກເບ້ຍຈາກເງິນກູ້ຢືມໃຫ້ລູກຄ້າທີ່ຄ້າງຊຳລະເກີນສາມເດືອນ, ລາຍຮັບດອກເບ້ຍທີ່ຄ້າງຊຳລະດັ່ງກ່າວຈະຖືກຮັບຮູ້ເມື່ອມີການຊຳລະ. ສາຂາຈະລ້າງລາຍການດອກເບ້ຍຄ້າງຊຳລະທັງໝົດດັ່ງກ່າວໂດຍຮັບຮູ້ລາຍຮັບທີ່ບໍ່ນອນຢູ່ໃນຫຼັກການບັນຊີຄົງຄ້າງ.

### 3.2 ການຮັບຮູ້ລາຍຈ່າຍ

ລາຍຈ່າຍ ແລະ ຄ່າທຳນຽມຈ່າຍ ສາຂາ ແມ່ນຮັບຮູ້ຕາມຫຼັກການຄົງຄ້າງ.

### 3.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ ເງິນຝາກທີ່ມີອາຍຸຄົບກຳນົດຕ່ຳກວ່າສາມເດືອນຈາກມື້ທີໄດ້ຝາກລວມເຖິງເງິນສົດໃນກຳມື, ເງິນຝາກໃນທະນາຄານແຫ່ງ ສປປ ລາວ, ເງິນຝາກຢູ່ໃນທະນາຄານອື່ນ ໆ ທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການ ແລະ ເງິນລົງທຶນໄລຍະສັ້ນອື່ນ ທີ່ມີສະພາບຄ່ອງສູງ ທີ່ມີກຳນົດເວລາ 30 ມື້ ຫຼື ໜ້ອຍກວ່ານັ້ນ.

### 3.4 ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ

ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ ທີ່ທະນາຄານມີຄວາມສາມາດທີ່ຈະຖືໄວ້ຈົນຄົບກຳນົດໄຖ່ຖອນຈັດເປັນປະເພດ ຕາສານໜີ້ທີ່ຖືຈົນຄົບກຳນົດ ແລະ ສະແດງດ້ວຍຕົ້ນທຶນຫັກສ່ວນປັບປຸງມູນຄ່າຂອງການສູນເສຍມູນຄ່າ (ຖ້າມີ)

### 3.5 ເງິນໃຫ້ກູ້ຢືມແກ່ລູກຄ້າ

ເມື່ອມີການປ່ອຍເງິນກູ້ໃຫ້ກັບຜູ້ກູ້ຢືມເງິນກູ້ຢືມດັ່ງກ່າວນັ້ນສາຂາບັນທຶກບັນຊີຕາມມູນຄ່າຕົ້ນທຶນ ແລະຈະຕັດອອກຈາກບັນຊີເມື່ອໄດ້ຮັບການຊຳລະສະສາງເງິນກູ້ຢືມດັ່ງກ່າວ ຫຼື ເມື່ອມີການລ້າງໜີ້ສູນອອກຈາກບັນຊີ.

ເງິນເບີກເກີນບັນຊີແມ່ນສະແດງດ້ວຍມູນຄ່າທີ່ເບີກເກີນບວກດອກເບ້ຍຄ້າງຮັບ. ເງິນໃຫ້ກູ້ຢືມແກ່ລູກຄ້າອື່ນໆແມ່ນສະແດງຕາມຍອດຕົ້ນທຶນກູ້ຢືມ.

### 3.6 ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ

ການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ຕ້ອງຮັບທວງຍາກຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນອີງຕາມລະບຽບຂອງທະນາຄານ ແຫ່ງ ສປປ ລາວ ມາດຕາ 4, ເລກທີ 324/ທຫລ ລົງວັນທີ 19 ເມສາ 2011. ການຈັດຊັ້ນໜີ້ນີ້ ແມ່ນຖືເປັນແນວທາງເພື່ອຊ່ວຍໃຫ້ສາຂາ ໃນການຄາດຄະເນການຕັ້ງສຳຮອງເງິນແຮ ສຳຫຼັບໜີ້ສູນໃຫ້ເໝາະສົມດັ່ງລຸ່ມນີ້:

| **ປະເພດຂອງໜີ້** | **ຈຳນວນມື້ຕາມການກຳນົດ** | **ອັດຕາເງິນແຮ** |
|---|---|---|
| ໜີ້ປົກກະຕິ | 1 ເຖິງ 30 ມື້ | ເອີງຕາມຂໍ້ກຳນົດຂອງ ທຫລ |
| ໜີ້ຄວນເອົາໃຈໃສ່ | 31 ເຖິງ 90 ມື້ | 3.00% |
| ໜີ້ຕ່ຳກວ່າມາດຕະຖານ | 91 ເຖິງ 180 ມື້ | 20.00% |
| ໜີ້ສົງໃສຈະສູນ | 181 ເຖິງ 360 ມື້ | 50.00% |
| ໜີ້ສູນ | ຫຼາຍກວ່າ 360 ມື້ | 100.00% |

ສ່ວນປ່ຽນແປງຂອງເງິນແຮໜີ້ທີ່ບໍ່ກໍ່ໃຫ້ເກີດລາຍໄດ້ແມ່ນໄດ້ບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານ ເປັນລາຍຈ່າຍເງິນແຮໜີ້ຕ້ອງຮັບທວງຍາກ ຫຼື ລາຍການເກັບຄືນເງິນແຮໜີ້ຕ້ອງຮັບທວງຍາກ. ສ່ວນບັນຊີເງິນແຮສຳລັບໜີ້ຕ້ອງຮັບທວງຍາກສະສົມແມ່ນໄດ້ບັນທຶກໄວ້ໃນໃບລາຍງານຖານະການເງິນ ເປັນບັນຊີເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ທີ່ນຳໄປຫັກອອກຈາກບັນຊີເງິນໃຫ້ກູ້ຢືມແກ່ລູກຄ້າ.

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງຂອງທະນາຄານກາງ, ສ່ວນປ່ຽນແປງຂອງຄັງສຳຮອງເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມສຳຫຼັບກິດຈະການໃຫ້ສິນເຊື່ອ ແມ່ນໃຫ້ບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານ ເປັນ ລາຍຈ່າຍອື່ນໆໃນການດຳເນີນງານເມື່ອມີການຕັ້ງສຳຮອງເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມແລະ ບັນທຶກເປັນ ລາຍຮັບອື່ນໆໃນການດຳເນີນງານ ເມື່ອມີການເກັບຄືນເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມ. ຄັງສຳຮອງເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມແມ່ນບັນທຶກຢູ່ໃນໃບລາຍງານຖານະການເງິນ ເປັນບັນຊີຄັງສຳຮອງເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມສຳຫຼັບກິດຈະການໃຫ້ສິນເຊື່ອພາຍໃຕ້ພາກບັນຊີຂອງສຳນັກງານໃຫຍ່.

3.7 ຊັບສົມບັດຄົງທີ່

ຊັບສົມບັດຄົງທີ່ ລວມມີ ຊັບສົມບັດຄົງທີ່ບໍ່ມີຕົວຕົນ ແລະ ຊັບສົມບັດຄົງທີ່ມີຕົວຕົນ.

3.7.1 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ແມ່ນສະແດງໃນລາຄາຕົ້ນທຶນລົບດ້ວຍຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າ (ຖ້າມີ).

ຄ່າຫຼຸ້ຍຫ້ຽນແມ່ນຄິດໄລ່ແບບເສັ້ນຊື່ ຕາມອັດຕາຄ່າຫຼຸ້ຍຫ້ຽນທີ່ກຳນົດໄວ້ໃນກົດໝາຍອາກອນ.

| | |
|---|---|
| ຕົ້ນທຶນໃນການສ້າງຕັ້ງ | 2 ປີ |
| ໂປແກຼມຄອມພິວເຕີ | 2 ປີ |

ເມື່ອຊັບສົມບັດຄົງທີ່ບໍ່ມີຕົວຕົນມີການເຊື່ອມມູນຄ່າລົງ, ຕ້ອງໄດ້ມີການຫັກຄ່າເຊື່ອມມູນຄ່າເພື່ອບັນທຶກຂາດທຶນຈາກຄ່າເຊື່ອມມູນຄ່າເປັນລາຍຈ່າຍອື່ນໆໃນການດຳເນີນງານ.

ກຳໄລ ຫຼື ຂາດທຶນໃນການຂາຍຊັບສົມບັດຄົງທີ່ບໍ່ມີຕົວຕົນແມ່ນບັນທຶກເປັນລາຍຮັບອື່ນ ຫຼື ລາຍຈ່າຍອື່ນໃນການດຳເນີນງານເມື່ອມີການຂາຍ.

3.7.2 ຊັບສິນບັດຄົງທີ່ມີຕົວຕົນ ແມ່ນສະແດງໃນລາຄາຕົ້ນທຶນລົບດ້ວຍ ຄ່າຫຼູ້ຍຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າ (ຖ້າມີ).

ຄ່າຫຼູ້ຍຫ້ຽນແມ່ນຄິດໄລ່ແບບເສັ້ນຊື່ ຕາມອັດຕາຄ່າຫຼູ້ຍຫ້ຽນທີ່ກຳນົດໄວ້ໃນກົດໝາຍອາກອນ

| | |
|---|---|
| ສ່ວນປັບປຸງອາຄານເຊົ່າ | 20 ປີ |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | 5 ປີ |
| ອຸປະກອນຄອມພິວເຕີ້ | 5 ປີ |

ເມື່ອຊັບສິນບັດຄົງທີ່ມີຕົວຕົນມີການເຊື່ອມມູນຄ່າລົງ, ຄ່າເຊື່ອມມູນຄ່າດັ່ງກ່າວແມ່ນໄດ້ຮັບຮູ້ເປັນຂາດທຶນຈາກຄ່າເຊື່ອມມູນຄ່າໂດຍສະແດງເປັນລາຍຈ່າຍອື່ນໆໃນການດຳເນີນງານ.

ກຳໄລ ຫຼື ຂາດທຶນຈາກການຂາຍຊັບສິນບັດຄົງທີ່ມີຕົວຕົນແມ່ນບັນທຶກເປັນລາຍຮັບອື່ນ ຫຼື ລາຍຈ່າຍອື່ນໃນການດຳເນີນງານເມື່ອມີການຂາຍ.

3.8 ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ

ລາຍການຕ່າງໆທີ່ສະແດງໃນເອກະສານລາຍງານການເງິນເຫຼົ່ານີ້ແມ່ນຖືກຮັບຮູ້ເປັນສະກຸນເງິນກີບ.

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນຖືກປ່ຽນຄ່າໃຫ້ເປັນສະກຸນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ. ຍອດຄົງເຫຼືອຂອງຊັບສິນ ແລະ ໜີ້ສິນທີ່ສະແດງໄວ້ໃນໃບລາຍງານຖານະການເງິນໃນມື້ລາຍງານ ແລະລາຍຮັບ ແລະ ລາຍຈ່າຍທີ່ສະແດງໄວ້ໃນໃບລາຍງານຜົນການດຳເນີນງານທີ່ມີມູນຄ່າເປັນເງິນຕາຕ່າງປະເທດ ແມ່ນຖືກປ່ຽນໃຫ້ເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນຂອງ ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ໃນວັນທີລາຍງານ.

ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການຊຳລະຫຼຸລະກຳຕ່າງໆ ຫຼື ເກີດຈາກລາຍການແລກປ່ຽນເງິນຕາຕ່າງປະເທດແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.9 ລາຍຈ່າຍອາກອນກຳໄລ

ລາຍຈ່າຍອາກອນກຳໄລ (ຖ້າມີ) ທີ່ເກີດຈາກຜົນກຳໄລ ຫຼື ຂາດທຶນ ພາຍໃນປີປະກອບດ້ວຍ ອາກອນໃນປີທີ່ຕ້ອງຈ່າຍ.

ອາກອນໃນປີທີ່ຕ້ອງຈ່າຍ ແມ່ນເປັນການຄາດຄະເນອາກອນທີ່ຕ້ອງຈ່າຍຂອງຈຳນວນລາຍຮັບພາຍໃນປີດ້ວຍການນຳໃຊ້ອັດຕາອາກອນທີ່ ບັງຄັບໃຊ້ ຫຼື ໃຊ້ອັດຕາອາກອນໃນວັນທີທີ່ກະກຽມ ໃບລາຍງານຖານະການເງິນ.

3.10 ການໃຊ້ດຸນພິນິດຂອງຜູ້ບໍລິຫານ

ການກະກຽມເອກະສານລາຍງານທາງການເງິນທີ່ສ້າງຂຶ້ນໂດຍສອດຄ່ອງກັບລະບຽບການ, ແຈ້ງການຕ່າງ ໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຊຶ່ງໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍ ຂໍ້ທີ 3 ຂອງເອກະສານລາຍງານການເງິນແມ່ນໄດ້ກຳນົດໃຫ້ຜູ້ບໍລິຫານຂອງສາຂາຕ້ອງນຳໃຊ້ດຸນພິນິດ ເພື່ອພິຈາລະນາການນຳໃຊ້ນະໂຍບາຍບັນຊີ, ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຖານທີ່ມີຜົນຕໍ່ກັບ ການລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນລວມທັງການເປີດເຜີຍພາລະຜູກພັນທາງດ້ານ ຊັບສິນ ແລະ ໜີ້ສິນທີ່ມີໃນວັນທີໄລຍະເວລາລາຍງານ ແລະ ການລາຍງານຈຳນວນລາຍຮັບ ແລະ ລາຍຈ່າຍ ໃນໄລຍະເວລາລາຍງານ ເຖິງແມ່ນວ່າ ການຄາດຄະເນເຫຼົ່ານີ້ແມ່ນສ້າງຂຶ້ນບົນພື້ນຖານການພິຈາລະນາ ທີ່ສົມເຫດສົມຜົນຂອງຜູ້ບໍລິຫານຕໍ່ກັບສະຖານະການໃນປັດຈຸບັນ, ຕົວເລກທີ່ເກີດຂຶ້ນຈິງອາດມີຄວາມ ຄາດເຄື່ອນຈາກຕົວເລກທີ່ໄດ້ຄາດຄະເນໄວ້.

## 4. ເງິນສົດໃນກຳມື

ເງິນສົດໃນກຳມື ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ສະກຸນເງິນກີບ ("ກີບ") | 486,352,000 | 297,263,000 |
| ສະກຸນເງິນຕ່າງປະເທດ ("FC") | 1,105,621,915 | 1,787,098,666 |
| | 1,591,973,915 | 2,084,361,666 |

## 5. ເງິນຝາກຢູ່ ທຫລ

ເງິນຝາກຢູ່ ທຫລ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ເງິນຝາກຮຽກເກັບເມື່ອຕ້ອງການ | 50,792,113,664 | 31,074,172,446 |
| ເງິນແຮຝາກບັງຄັບ | 439,315,981 | - |
| ເງິນຝາກຄ້ຳປະກັນຂອງທຶນຈົດທະບຽນ | 5,000,000 | 24,985,000,000 |
| | 51,236,429,645 | 56,059,172,446 |

ເງິນແຮຝາກບັງຄັບທີ່ຝາກຢູ່ທະນາຄານແຫ່ງ ສປປ ລາວ ແມ່ນຖືກເກັບຮັກສາຕາມລະບຽບການບັງຄັບໃຊ້ຂອງ ທະນາຄານແຫ່ງ ສປປ ລາວ, ໂດຍເງິນຈຳນວນດັ່ງກ່າວນັ້ນຖືກກຳນົດເປັນເປີເຊັນຂອງເງິນຝາກຂອງລູກຄ້າທີ່ ຝາກໄວ້ກັບສາຂາ ໂດຍຄິດໄລ່ໃນອັດຕາ 5% ຂອງນເງິນຝາກທີ່ ເປັນສະກຸນເງິນກີບ ແລະ 10% ຂອງເງິນຝາກທີ່

ເປັນສະກຸນເງິນຕາຕ່າງປະເທດ ໂດຍເງິນຝາກເຫຼົ່ານີ້ແມ່ນຈະບໍ່ໄດ້ຮັບດອກເບ້ຍ.

ເງິນຝາກຄ້ຳປະກັນຂອງທຶນຈົດທະບຽນແມ່ນຖືກເກັບຮັກສາໄວ້ກັບທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ສອດຄ່ອງຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ. ເງິນຝາກເຫຼົ່ານີ້ແມ່ນຈະບໍ່ໄດ້ຮັບດອກເບ້ຍ.

## 6. ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ

ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ | | |
| ພັນທະບັດຂອງກະຊວງການເງິນ | 10,000,000,000 | 20,000,000,000 |
| | 10,000,000,000 | 20,000,000,000 |

ລາຍລະອຽດຂອງເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ ໃນວັນທີ 31 ທັນວາ 2017 ມີດັ່ງລຸ່ມນີ້:

| ໄລຍະເວລາ | ວັນທີອອກ | ວັນຄົບກຳນົດ | ອັດຕາດອກເບ້ຍ<br>% ຕໍ່ປີ | 2017<br>ກີບ |
|---|---|---|---|---|
| 3 ປີ | 11 ພະຈິກ 2016 | 11 ພະຈິກ 2019 | 6.00 | 10,000,000,000 |
| | | | | 10,000,000,000 |

ລາຍລະອຽດຂອງເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ ໃນວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

| ໄລຍະເວລາ | ວັນທີອອກ | ວັນຄົບກຳນົດ | ອັດຕາດອກເບ້ຍ<br>% ຕໍ່ປີ | 2016<br>ກີບ |
|---|---|---|---|---|
| 1 ປີ | 14 ຕຸລາ 2016 | 14 ຕຸລາ 2017 | 5.00 | 10,000,000,000 |
| 3 ປີ | 11 ພະຈິກ 2016 | 11 ພະຈິກ 2019 | 6.00 | 10,000,000,000 |
| | | | | 20,000,000,000 |

## 7. ເງິນກູ້ໃຫ້ແກ່ລູກຄ້າ, ຫຼັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ

ເງິນກູ້ໃຫ້ແກ່ລູກຄ້າ, ຫຼັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າ | 15,100,826,097 | - |
| <u>ຫັກ</u> ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | - | - |
| | 15,100,826,097 | - |

7.1 ເງິນກູ້ໃຫ້ແກ່ລູກຄ້າ ຖືກຈັດປະເພດດັ່ງລຸ່ມນີ້:

7.1.1 ເງິນກູ້ໃຫ້ແກ່ລູກຄ້າ ຖືກຈັດປະເພດ ຕາມປະເພດເງິນກູ້ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ເງິນໃຫ້ກູ້ຢືມແກ່ພາກທຸລະກິດ | 15,100,826,097 | - |
| | 15,100,826,097 | - |

7.1.2 ເງິນກູ້ໃຫ້ແກ່ລູກຄ້າ ຖືກຈັດປະເພດ ຕາມສະກຸນເງິນ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ກີບ | 1,999,840,000 | - |
| ບາດ | 13,100,986,097 | - |
| | 15,100,826,097 | - |

7.1.3 ເງິນກູ້ໃຫ້ແກ່ລູກຄ້າ ຖືກຈັດປະເພດ ຕາມຜົນການດຳເນີນງານ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ສິນເຊື່ອທີ່ມີຄຸນນະພາບ | 15,100,826,097 | - |
| ສິນເຊື່ອທີ່ບໍ່ມີຄຸນນະພາບ ("NPL") | - | - |
| | 15,100,826,097 | - |

7.2 ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ

ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ໃນວັນທີ 31 ທັນວາ 2017 ມີດັ່ງລຸ່ມນີ້ (ໃນວັນທີ 31 ທັນວາ 2016: ບໍ່ມີ):

| | 2017 | | |
|---|---|---|---|
| | ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | ເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມສຳຫຼັບກິດຈະການໃຫ້ສິນເຊື່ອ | ລວມ |
| | ກີບ | ກີບ | ກີບ |
| ຍອດເຫຼືອຕົ້ນປີ | - | - | - |
| <u>ເພີ່ມ</u> ເງິນແຮໃນປີ | - | 177,997,920 | 177,997,920 |
| ການປັບມູນຄ່າຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ | - | 4,627,680 | 4,627,680 |
| **ຍອດເຫຼືອທ້າຍປີ** | - | 182,625,600 | 182,625,600 |

ເງິນກູ້ໃຫ້ແກ່ລູກຄ້າ ຕາມປະເພດຂອງການຈັດຊັ້ນໜີ້ແລະ ເງິນແຮ ຕາມລະບຽບຂອງທະນະຄານ ແຫ່ງ ສປປ ລາວ ໃນວັນທີ 31 ທັນວາ 2017 ມີດັ່ງລຸ່ມນີ້ (ໃນວັນທີ 31 ທັນວາ 2016: ບໍ່ມີ):

| | 2017 | | | |
|---|---|---|---|---|
| | ເງິນກູ້ໃຫ້ແກ່ລູກຄ້າ | ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ<br>ສຳລັບ NPL | ເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມສຳຫຼັບກິດຈະການໃຫ້ສິນເຊື່ອ | ລວມ |
| | ກີບ | ກີບ | ກີບ | ກີບ |
| ສິນເຊື່ອທີ່ມີຄຸນນະພາບ | | | | |
| ໜີ້ປົກກະຕິ | 15,100,826,097 | - | 182,625,600 | 182,625,600 |
| | 15,100,826,097 | - | 182,625,600 | 182,625,600 |

ໃນວັນທີ 31 ທັນວາ 2017 ສາຂາ ມີ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກສະສົມ ສຳລັບສິນເຊື່ອທີ່ມີຄຸນນະພາບ ໃນໃບລາຍງານຖານະການເງິນ ໃນບັນຊີ ເງິນແຮທົ່ວໄປສຳຫຼັບການສູນເສຍເງິນກູ້ລວມສຳຫຼັບກິດຈະການໃຫ້ສິນເຊື່ອ ເປັນຈຳນວນ 182,625,600 ກີບ (ໃນວັນທີ 31 ທັນວາ 2016: ບໍ່ມີ):

## 8. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

**ໃນວັນທີ 31 ທັນວາ 2017**

| | ຍອດໃນ ວັນທີ 1 ມັງກອນ 2017 | ເພີ່ມຂຶ້ນ | ຈຳໜ່າຍອອກ | ຍອດໃນ ວັນທີ 31 ທັນວາ 2017 |
|---|---|---|---|---|
| | ກີບ | ກີບ | ກີບ | ກີບ |
| ຕົ້ນທຶນ: | | | | |
| ຕົ້ນທຶນໃນການສ້າງຕັ້ງ | 488,818,600 | - | - | 488,818,600 |
| ໂປແກຼມຄອມພິວເຕີ | 65,024,000 | - | - | 65,024,000 |
| ລວມຕົ້ນທຶນ | 553,842,600 | - | - | 553,842,600 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | |
| ຕົ້ນທຶນໃນການສ້າງຕັ້ງ | (244,409,300) | (244,409,300) | - | (488,818,600) |
| ໂປແກຼມຄອມພິວເຕີ | (32,512,000) | (31,889,335) | - | (64,401,335) |
| ລວມຄ່າຫຼຸ້ຍຫ້ຽນສະສົມ | (276,921,300) | (276,298,635) | - | (553,219,935) |
| **ມູນຄ່າຊັບສິນບັດຄົງທີ່ບໍ່ມີຕົວຕົນສຸດທິ** | 276,921,300 | | | 622,665 |

**ໃນວັນທີ 31 ທັນວາ 2016**

| | ຍອດໃນ ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) | ເພີ່ມຂຶ້ນ | ຈຳໜ່າຍອອກ | ຍອດໃນ ວັນທີ 31 ທັນວາ 2016 |
|---|---|---|---|---|
| | ກີບ | ກີບ | ກີບ | ກີບ |
| ຕົ້ນທຶນ: | | | | |
| ຕົ້ນທຶນໃນການສ້າງຕັ້ງ | - | 488,818,600 | - | 488,818,600 |
| ໂປແກຼມຄອມພິວເຕີ | - | 65,024,000 | - | 65,024,000 |
| ລວມຕົ້ນທຶນ | - | 553,842,600 | - | 553,842,600 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | |
| ຕົ້ນທຶນໃນການສ້າງຕັ້ງ | - | (244,409,300) | - | (244,409,300) |
| ໂປແກຼມຄອມພິວເຕີ | - | (32,512,000) | - | (32,512,000) |
| ລວມຄ່າຫຼຸ້ຍຫ້ຽນສະສົມ | - | (276,921,300) | - | (276,921,300) |
| **ມູນຄ່າຊັບສິນບັດຄົງທີ່ບໍ່ມີຕົວຕົນສຸດທິ** | - | | | 276,921,300 |

**ຄ່າຫຼຸ້ຍຫ້ຽນ**

| | |
|---|---|
| ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 | 276,298,635 |
| ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 | 276,921,300 |

## 9. ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

**ໃນວັນທີ 31 ທັນວາ 2017**

| | ຍອດໃນ ວັນທີ 1 ມັງກອນ 2017 | ເພີ່ມຂຶ້ນ | ຈຳໜ່າຍອອກ | ຍອດໃນ ວັນທີ 31 ທັນວາ 2017 |
|---|---|---|---|---|
| | ກີບ | ກີບ | ກີບ | ກີບ |
| ຕົ້ນທຶນ: | | | | |
| ສ່ວນປັບປຸງອາຄານເຊົ່າ | 2,077,118,422 | 31,413,756 | - | 2,108,532,178 |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | 1,643,859,088 | 27,478,073 | - | 1,671,337,161 |
| ອຸປະກອນຄອມພິວເຕີ | 668,102,621 | 31,964,992 | - | 700,067,613 |
| ລວມຕົ້ນທຶນ | 4,389,080,131 | 90,856,821 | - | 4,479,936,952 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | |
| ສ່ວນປັບປຸງອາຄານເຊົ່າ | (69,390,629) | (138,272,213) | - | (207,662,842) |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | (325,712,637) | (329,575,211) | - | (655,287,848) |
| ອຸປະກອນຄອມພິວເຕີ | (132,200,212) | (134,437,156) | - | (266,637,368) |
| ລວມຄ່າຫຼຸ້ຍຫ້ຽນສະສົມ | (527,303,478) | (602,284,580) | - | (1,129,588,058) |
| **ມູນຄ່າຊັບສິນບັດຄົງທີ່ມີຕົວຕົນສຸດທິ** | 3,861,776,653 | | | 3,350,348,894 |

ໃນວັນທີ 31 ທັນວາ 2016

| | ຍອດໃນວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) | ເພີ່ມຂຶ້ນ | ຈຳໜ່າຍອອກ | ຍອດໃນວັນທີ 31 ທັນວາ 2016 |
|---|---|---|---|---|
| | ກີບ | ກີບ | ກີບ | ກີບ |
| ຕົ້ນທຶນ: | | | | |
| ສ່ວນປັບປຸງອາຄານເຊົ່າ | - | 2,077,118,422 | - | 2,077,118,422 |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | - | 1,643,859,088 | - | 1,643,859,088 |
| ອຸປະກອນຄອມພິວເຕີ | - | 668,102,621 | - | 668,102,621 |
| ລວມຕົ້ນທຶນ | - | 4,389,080,131 | - | 4,389,080,131 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | |
| ສ່ວນປັບປຸງອາຄານເຊົ່າ | - | (69,390,629) | - | (69,390,629) |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | - | (325,712,637) | - | (325,712,637) |
| ອຸປະກອນຄອມພິວເຕີ | - | (132,200,212) | - | (132,200,212) |
| ລວມຄ່າຫຼຸ້ຍຫ້ຽນສະສົມ | - | (527,303,478) | - | (527,303,478) |
| **ມູນຄ່າຊັບສົມບັດຄົງທີ່ມີຕົວຕົນສຸດທິ** | - | | | 3,861,776,653 |

**ຄ່າຫຼຸ້ຍຫ້ຽນ**

| | |
|---|---|
| ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 | 602,284,580 |
| ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 | 527,303,478 |

## 10. ດອກເບ້ຍຄ້າງຮັບ

ດອກເບ້ຍຄ້າງຮັບ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ດອກເບ້ຍຄ້າງຮັບ - ຈາກລູກໜີ້ສາຂາອື່ນ | 145,764,330 | 42,500,000 |
| ດອກເບ້ຍຄ້າງຮັບ - ຈາກເງິນລົງທຶນ | 85,000,000 | 194,722,222 |
| ດອກເບ້ຍຄ້າງຮັບ - ຈາກເງິນກູ້ໃຫ້ແກ່ລູກຄ້າ | 80,029,277 | - |
| | 310,793,607 | 237,222,222 |

## 11. ຊັບສິນອື່ນໆ

ຊັບສິນອື່ນໆ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນຈ່າຍລ່ວງໜ້າ | 5,121,061,049 | 5,802,889,933 |
| | 5,121,061,049 | 5,802,889,933 |

## 12. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ໜີ້ຕ້ອງສົ່ງໃຫ້ລູກຄ້າ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນຝາກຮຽກເກັບເມື່ອຕ້ອງການ | | |
| ເງິນຝາກກະແສລາຍວັນ | 1,170,339,246 | 504,198,067 |
| ເງິນຝາກປະຢັດ | 2,534,528,845 | 1,080,817,296 |
| ລວມ | 3,704,868,091 | 1,585,015,363 |
| ເງິນຝາກມີກຳນົດ | | |
| ເງິນຝາກມີກຳນົດ | 507,280,228 | 398,857,212 |
| ລວມ | 507,280,228 | 398,857,212 |
| ໜີ້ຕ້ອງສົ່ງອື່ນໆລູກຄ້າ | 740,320 | - |
| | 4,212,888,639 | 1,983,872,575 |

ໜີ້ຕ້ອງສົ່ງໃຫ້ລູກຄ້າ ຖືກຈັດປະເພດຕາມສະກຸນເງິນ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ກີບ | 524,463,367 | 467,960,984 |
| ໂດລາ | 1,223,978,503 | 597,274,434 |
| ບາດ | 2,464,446,769 | 918,637,157 |
| | 4,212,888,639 | 1,983,872,575 |

## 13. ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ

ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ - ໃຫ້ລູກຄ້າ | 7,149,264 | 8,427,279 |
| | 7,149,264 | 8,427,279 |

## 14. ທຶນຂອງສາຂາ

ສາຂາມີທຶນຈົດທະບຽນເລີ່ມຕົ້ນ 101.65 ຕື້ກີບ ໃນວັນທີ 31 ທັນວາ 2017 ແລະ 2016 ສາຂາມີທຶນຈົດທະບຽນ ຈຳນວນ 101.65 ຕື້ກີບ.

## 15. ຍອດຄົງເຫຼືອແລະລາຍການເຄື່ອນໄຫວທີ່ມີສ່ວນກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງ

ຍອດຄົງເຫຼືອ ທີ່ມີສ່ວນກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ລູກໜີ້ສາຂາອື່ນ | | |
| ເງິນຝາກ | 48,131,870,654 | 21,160,416,948 |
| ເຈົ້າໜີ້ສາຂາອື່ນ | | |
| ເງິນຝາກ | 33,705,418,972 | 9,452,486,393 |

ລູກໜີ້ສາຂາອື່ນ ຖືກຈັດປະເພດ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| a) ຕາມປະເພດເງິນຝາກ: | | |
| ເງິນຝາກຮຽກເກັບເມື່ອຕ້ອງການ | 23,131,870,154 | 11,160,416,948 |
| ເງິນຝາກມີກຳນົດ | 25,000,000,000 | 10,000,000,000 |
| | 48,131,870,154 | 21,160,416,948 |
| b) ຕາມສະກຸນເງິນ: | | |
| ກີບ | 41,436,163,127 | 16,355,293,363 |
| ໂດລາ | 4,189,231,825 | 2,740,719,510 |
| ບາດ | 2,506,475,702 | 2,064,404,075 |
| | 48,131,870,654 | 21,160,416,948 |

ເງິນຝາກມີກຳນົດກັບສາຂາອື່ນ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 ມີອັດຕາດອກເບ້ຍ 3.00% - 3.25% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດກັບສາຂາອື່ນ ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016 ມີອັດຕາດອກເບ້ຍ 3.00% ຕໍ່ປີ

ເຈົ້າໜີ້ສາຂາອື່ນ ຖືກຈັດປະເພດ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| a) ຕາມປະເພດເງິນຝາກ: | | |
| ເງິນຝາກຮຽກເກັບເມື່ອຕ້ອງການ | 28,627,418,972 | 9,452,486,393 |
| ເງິນຝາກມີກຳນົດ | 5,078,000,000 | - |
| | 33,705,418,972 | 9,452,486,393 |
| b) ຕາມສະກຸນເງິນ: | | |
| ກີບ | 18,293,749,700 | 3,903,767,000 |
| ໂດລາ | 4,880,048,850 | 5,104,375,000 |
| ບາດ | 10,531,620,422 | 444,344,393 |
| | 33,705,418,972 | 9,452,486,393 |

ເງິນຝາກມີກຳນົດກັບ ເຈົ້າໜີ້ສາຂາອື່ນໆ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 ມີອັດຕາດອກເບ້ຍ 3.25% ຕໍ່ປີ (ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016: ບໍ່ມີ)

ລາຍການທີ່ມີສ່ວນກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 ແລະ ສຳລັບໄລຍະເວລາແຕ່ວັນທີ 5 ມັງກອນ 2016 (ວັນສ້າງຕັ້ງ) ເຖິງວັນທີ 31 ທັນວາ 2016, ທີ່ຢູ່ໃນເງື່ອນໄຂການຄ້າປົກກະຕິ ມີດັ່ງລຸ່ມນີ້:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ລາຍຮັບດອກເບ້ຍ | | |
| ສາຂາອື່ນ | 675,323,438 | 42,500,000 |
| ລາຍຈ່າຍດອກເບ້ຍ | | |
| ສາຂາອື່ນ | 103,542,510 | - |

## 16. ການບໍລິຫານຄວາມສ່ຽງທາງດ້ານການເງິນ

ນິຕິແນະນຳ ແລະ ນະໂຍບາຍທີ່ນຳໃຊ້ໃນສາຂາເພື່ອບໍລິຫານຄວາມສ່ຽງທີ່ເກີດຂຶ້ນໃນແຕ່ລະກິດຈະກຳການດຳເນີນທຸລະກິດ ມີດັ່ງລຸ່ມນີ້:

### 16.1 ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອ ອາດເຮັດໃຫ້ເກີດການສູນເສຍຂອງລາຍຮັບ ແລະ ຈຳນວນເງິນຕົ້ນທີ່ໃຫ້ກູ້ຢືມ ໃນຮູບການຫັກເງິນແຮ ທີ່ເປັນຜົນມາຈາກຜູ້ກູ້ຢືມ ຫຼື ຄູ່ສັນຍາບໍ່ຊຳລະໜີ້ທີ່ໄດ້ກູ້ຢືມ, ການຄ້ຳປະກັນ ຄວາມສ່ຽງ ແລະ ຜ່ານກິດຈະກຳການລົງທຶນ.

ຄວາມສ່ຽງທີ່ສຳຄັນໄດ້ແກ່ຄວາມສ່ຽງໃນການໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ. ຈຳນວນສິນເຊື່ອ ທີ່ອາດກໍ່ໃຫ້ເກີດຄວາມສ່ຽງໄດ້ສະແດງເປັນລາຍການຊັບສິນຢູ່ໃນໃບລາຍງານຖານະການເງິນ. ການໃຫ້ກູ້ຢືມເງິນຂອງສາຂາແມ່ນປະຕິບັດຕາມນະໂຍບາຍສິນເຊື່ອຂອງທະນາຄານເພື່ອໃຫ້ໝັ້ນໃຈວ່າວັດຖຸປະສົງໂດຍລວມໃນການໃຫ້ກູ້ຢືມແມ່ນບັນລຸຕາມເປົ້າໝາຍທີ່ກຳນົດໄວ້ ເຊັ່ນ: ອັດສ່ວນໃນການປ່ອຍເງິນກູ້ທັງໝົດແມ່ນ ມີຄວາມໝັ້ນຄົງ  ແລະ ຄຸນນະພາບດີ ແລະ ຄວາມສ່ຽງທາງດ້ານສິນເຊື່ອ ແມ່ນຖືກກະຈາຍອອກໄປຢ່າງມີປະສິດທິພາບ. ນະໂຍບາຍສິນເຊື່ອໄດ້ອະທິບາຍຂັ້ນຕອນໃນການປະກອບເອກະສານຂໍສິນເຊື່ອ, ນະໂຍບາຍໃນການປ່ອຍກູ້ຢືມ, ນະໂຍບາຍຫຼັກຊັບຄ້ຳປະກັນ ແລະ ຂັ້ນຕອນການອະນຸມັດສິນເຊື່ອ ໄດ້ລວມຢູ່ໃນລະບຽບການຄວບຄຸມພາຍໃນຂອງສາຂາ.

### 16.2 ຄວາມສ່ຽງດ້ານການຕະຫຼາດ

ຄວາມສ່ຽງດ້ານຕະຫຼາດ ແມ່ນຄວາມສ່ຽງທາງດ້ານການສູນເສຍທີ່ເກີດຂຶ້ນຈາກການເຄືອນໄຫວທີ່ບໍ່ເອື້ອອຳນວຍໃນລະດັບຂອງລາຄາ ຫຼື ອັດຕາຕ່າງໆໃນຕະຫຼາດ ເຊິ່ງປະກອບມີ 2 ອົງປະກອບຫຼັກຄື: ຄວາມສ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ຄວາມສ່ຽງຈາກອັດຕາດອກເບ້ຍ.

(i) ຄວາມສ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ

ຄວາມສ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ ໝາຍເຖິງການເຄື່ອນໄຫວຂອງອັດຕາແລກປ່ຽນທີ່ກະທົບຕໍ່ອັດຕາແລກປ່ຽນເງິນຕາຕ່າງປະເທດເປັນແຕ່ລະໄລຍະ. ສາຂາຍັງຄົງປະຕິບັດຕາມນະໂຍບາຍໃນການຄວບຄຸມບໍ່ໃຫ້ເກີດຄວາມສ່ຽງຫຼາຍຈາກອັດຕາແລກປ່ຽນ.  ຄວາມສ່ຽງທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ ແມ່ນມີການຕິດຕາມ, ຄວບຄຸມເບິ່ງແຍງ ໃຫ້ສອດຄ່ອງກັບການດຳເນີນງານ ແລະ ມີການກຳນົດລະດັບຄວາມສ່ຽງທີ່ຮັບໄດ້.

(ii) ຄວາມສ່ຽງຈາກອັດຕາດອກເບ້ຍ

ຄວາມສ່ຽງຈາກອັດຕາດອກເບ້ຍ ໝາຍເຖິງການສູນເສຍລາຍຮັບສຸດທິ ເຊິ່ງເປັນຜົນມາຈາກການປ່ຽນແປງລະດັບອັດຕາດອກເບ້ຍ ແລະ ການປ່ຽນແປງອົງປະກອບຕ່າງໆຂອງຊັບສິນ ແລະ ໜີ້ສິນ. ຄວາມສ່ຽງທາງດ້ານອັດຕາດອກເບ້ຍຖືກບໍລິຫານ ໂດຍການຕິດຕາມຢ່າງຕິດແທດ ຕໍ່ກັບຜົນຕອບແທນໃນການລົງທຶນ, ການຕັ້ງລາຄາໃນຕະຫຼາດ, ຕົ້ນທຶນຂອງເງິນທຶນ ແລະ ຜ່ານການປະເມີນຄວາມຫ່າງຂອງລະດັບລາຄາຄືນ ໂດຍກຸ່ມບໍລິຫານຄວາມສ່ຽງຂອງທະນາຄານ.

16.3 ຄວາມສ່ຽງທາງດ້ານສະພາບຄ່ອງ

ຄວາມສ່ຽງທາງດ້ານສະພາບຄ່ອງກ່ຽວຂ້ອງກັບຄວາມສາມາດໃນການຮັກສາຊັບສິນທີ່ມີສະພາບຄ່ອງ ໃຫ້ພຽງພໍ ຕໍ່ກັບພາລະຜູກພັນ ແລະ ພັນທະທາງການເງິນ ເມື່ອເຖິງກຳນົດເວລາຊຳລະ ໃນຕົ້ນຕົນທີ່ ສົມເຫດສົມຜົນ.

ສຳນັກງານໃຫຍ່ເປັນຜູ້ໃຫ້ການສະໜັບສະໜູນສະພາບຄ່ອງແກ່ສາຂາ. ກຸ່ມບໍລິຫານຄວາມສ່ຽງຂອງ ສຳນັກງານໃຫຍ່ເປັນຜູ້ຕິດຕາມກະແສເງິນເຂົ້າ ແລະ ກະແສເງິນອອກທັງໝົດ, ຊ່ອງໄລຍະຫ່າງຂອງ ແຕ່ລະຮອບເວລາລາຍງານ. ການເຄື່ອນໄຫວຂອງເງິນກູ້ຢືມ ແລະ ເງິນຝາກຂອງລູກຄ້າ ແມ່ນຈະຖືກ ຕິດຕາມ ແລະ ເງື່ອນໄຂສະພາບຄ່ອງແມ່ນຈະຖືກປັບປຸງຕາມສະພາບການ ເພື່ອໃຫ້ໝັ້ນໃຈວ່າ ຊັບສິນທີ່ມີສະພາບຄ່ອງມີຄວາມພຽງພໍຕໍ່ກັບພາລະຜູກພັນ ແລະ ພັນທະທາງການເງິນ ເມື່ອເຖິງກຳນົດ ເວລາຊຳລະ.

## 17. ການຈັດປະເພດບັນຊີຄືນໃໝ່

ໄດ້ມີການປັບປຸງການຈັດປະເພດບັນຊີຄືນໃໝ່ສຳລັບລາຍການໃນໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2016 ເພື່ອປະຕິບັດຕາມການນຳສະເໜີໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2017 ລາຍລະອຽດມີດັ່ງນີ້:

| ລາຍການ | ລາຍງານໃນຄັ້ງກ່ອນ | ລາຍງານໃນປີດຈຸບັນ | ມູນຄ່າ ກີບ |
|---|---|---|---|
| ເງິນຝາກມີກຳນົດກັບສາຂາອື່ນ ໆ | ໜີ້ຕ້ອງຮັບຈາກທະນາຄານອື່ນ-ເງິນຝາກມີກຳນົດ | ລູກໜີ້ສາຂາອື່ນ | 10,000,000,000 |
| ເງິນຝາກມີກຳນົດກັບສາຂາອື່ນ ໆ | ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ-ເງິນຝາກມີກຳນົດ | ເຈົ້າໜີ້ສາຂາອື່ນ | 11,160,416,948 |
| ໜີ້ຕ້ອງສົ່ງອາກອນຫັກນະທີ່ຈ່າຍ ຄ້າງຈ່າຍ | ໜີ້ຕ້ອງສົ່ງອາກອນຄ້າງຈ່າຍ | ໜີ້ສິນອື່ນໆ - ອື່ນໆ | 1,596,800 |
| ລາຍຈ່າຍດອກເບ້ຍສຳລັບເງິນເບີກເກີນບັນຊີຈາກລາຍການລະຫວ່າງທະນາຄານ | ລາຍຈ່າຍດອກເບ້ຍສຳລັບລູກຄ້າເງິນຝາກ | ລາຍຈ່າຍດອກເບ້ຍຈາກລາຍການລະຫວ່າງທະນາຄານ | 500 |
| ລາຍການເຄື່ອນໄຫວທີ່ມີກັບສຳນັກງານໃຫຍ່ ແລະ ສາຂາອື່ນໆ | ຊັບສິນອື່ນໆ | ເຈົ້າໜີ້ສາຂາອື່ນ | 9,452,486,393 |